ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ: 002 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 08 DEC 2015

# ລະບຽບ
# ວ່າດ້ວຍ ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ທັນວາ 2013;
- ອີງຕາມໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 034/ສຄຄຊ, ລົງວັນທີ 27 ຕຸລາ 2015.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ກຳນົດ ເງື່ອນໄຂການຮັບຮອງ, ຂອບເຂດສິດ, ໜ້າທີ່ ແລະ ມາດຕະການ ກ່ຽວກັບບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ເພື່ອອຳນວຍຄວາມສະດວກໃຫ້ແກ່ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ກຸ່ມເປົ້າໝາຍໃນຂົງເຂດວຽກງານຫຼັກຊັບ ຢູ່ ສປປ ລາວ ແນໃສ່ຮັບປະກັນໃຫ້ແກ່ການເຄື່ອນໄຫວການບໍລິການດັ່ງກ່າວ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກພາກພື້ນ ແລະ ສາກົນ, ກຸ່ມເປົ້າໝາຍ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ທີ່ຕິດພັນກັບວຽກງານຫຼັກຊັບ ຢູ່ ສປປ ລາວ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງຂອງຕ່າງປະເທດ;
2. **ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ** ໝາຍເຖິງ ການອະນຸຍາດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງ ປະເທດ ເຂົ້າມາເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍ ທີ່ຕິດພັນ ກັບວຽກງານຫຼັກຊັບ ຢູ່ ສປປ ລາວ;
3. **ກຸ່ມເປົ້າໝາຍ** ໝາຍເຖິງ ບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ, ບໍລິສັດອອກຈຳໜ່າຍຫຼັກຊັບ, ບໍລິສັດຈົດທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນຂົງເຂດວຽກ ງານຫຼັກຊັບ ທີ່ໃຊ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ຢູ່ ສປປ ລາວ.

## ໝວດທີ 2
## ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ

**ມາດຕາ 4 ການຂໍຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການຈັດລຳດັບຄວາມໜ້າ ເຊື່ອຖື ໃຫ້ແກ່ກຸ່ມເປົ້າໝາຍ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ແລະ ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງລະບຽບສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງ ຫຼັກຊັບ ພິຈາລະນາຮັບຮອງ.

**ມາດຕາ 5 ເງື່ອນໄຂການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດຈັດລຳດັບຄວາມໜ້າເຊື່ອຖືສາກົນ ເປັນຕົ້ນ (Standard & Poor’s, Fitch Ratings, Moody’s Investor Service, Rating and Investment Information) ຫຼື ເປັນບໍລິສັດຈັດລຳດັບຄວາມ ໜ້າເຊື່ອຖື ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດທີ່ເປັນສະມາຊິກຂອງອົງການຄຸ້ມຄອງວຽກງານ ຫຼັກຊັບສາກົນ (IOSCO) ຫຼື ຂອງປະເທດທີ່ມີສາຍພົວພັນຮ່ວມມື ໂດຍການເຊັນບົດບັນທຶກ ຄວາມເຂົ້າໃຈຮ່ວມກັບອົງການຄຸ້ມຄອງວຽກງານຫຼັກຊັບຂອງ ສປປ ລາວ;
2. ມີຊື່ສຽງ ແລະ ປະສົບການໃນການຈັດລຳດັບຄວາມໜ້າເຊື່ອຖື;
3. ມີລະບົບການຄຸ້ມຄອງບໍລິຫານພາຍໃນທີ່ຮັບປະກັນ;
4. ມີຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖືທີ່ໄດ້ຮັບ ໃບຢັ້ງຢືນການຜ່ານຫຼັກສູດທາງດ້ານວິຊາ ຊີບການເງິນ ແລະ ການລົງທຶນລະດັບສາກົນ (Chartered Financial Analyst: CFA), ໃບຢັ້ງຢືນ ວິຊາຊີບຈັດລຳດັບຄວາມໜ້າເຊື່ອຖື (Rating Practioner), ໃບຮັບຮອງເປັນຜູ້ຮັບຜິດຊອບຈັດລຳ ດັບຄວາມໜ້າເຊື່ອຖືຈາກ ອົງການຄຸ້ມຄອງວຽກງານຫຼັກຊັບ ຈາກຕ່າງປະເທດ ຢ່າງໜ້ອຍ ສອງ

ຄືນ ພ້ອມທັງມີປະສົບການຈັດລຳດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ ຢ່າງໜ້ອຍ ສອງປີ;

5. ມີຖານະການເງິນດີ ຫຼື ການເຄື່ອນໄຫວທຸລະກິດ ຕ້ອງມີກຳໄລ ໜຶ່ງປີຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 ເອກະສານປະກອບການຂໍຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ເອກະສານປະກອບການຂໍຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບອະນຸຍາດສ້າງຕັ້ງ ຫຼື ໃບທະບຽນວິສາຫະກິດຂອງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ;
3. ຊີວະປະຫວັດຫຍໍ້ ຂອງຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ສຳເນົາໃບຢັ້ງຢືນການຜ່ານຫຼັກສູດທາງດ້ານວິຊາຊີບການເງິນ ແລະ ການລົງທຶນລະດັບສາກົນ (Charte red Financial Analyst: CFA), ໃບຢັ້ງຢືນວິຊາຊີບຈັດລຳດັບຄວາມໜ້າເຊື່ອຖື (Rating Practioner) ຫຼື ໃບຮັບຮອງເປັນຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖືຈາກ ອົງການຄຸ້ມຄອງວຽກງານຫຼັກຊັບ ຈາກຕ່າງປະເທດ ຂອງຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື;
5. ສຳເນົາກົດລະບຽບຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ;
6. ບົດລາຍງານການເຄື່ອນໄຫວທຸລະກິດ ແລະ ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
7. ແຜນການເຄື່ອນໄຫວທຸລະກິດປະຈຳປີ ຢູ່ ສປປ ລາວ ພາຍຫຼັງໄດ້ຮັບການຮັບຮອງ.

**ມາດຕາ 7 ການພິຈາລະນາຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາ ຫຼື ປະຕິເສດ ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ກໍລະນີປະຕິເສດ ຕ້ອງແຈ້ງຕອບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 8 ອາຍຸການຮັບຮອງຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ໃບຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ມີອາຍຸການ ສາມປີ ນັບແຕ່ວັນໄດ້ຮັບການຮັບຮອງເປັນຕົ້ນໄປ.

**ມາດຕາ 9 ການຕໍ່ອາຍຸການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງລະບຽບສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສີ່ສິບຫ້າວັນ ກ່ອນວັນໝົດອາຍຸການຮັບຮອງ.

## ໝວດທີ 3
## ຂອບເຂດການເຄື່ອນໄຫວຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ

**ມາດຕາ 10 ຂອບເຂດການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ສາມາດໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍ ໃນຂອບເຂດ ດັ່ງນີ້:

1. ຈັດລຳດັບຄຸນນະພາບ ແລະ ຄວາມສ່ຽງຂອງຫຼັກຊັບ ເປັນຕົ້ນ ຮຸ້ນກູ້ ຫຼື ພັນທະບັດ ແລະ ຫຼັກຊັບ ອື່ນໆ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະໄລຍະ;
2. ຈັດລຳດັບການຄຸ້ມຄອງບໍລິຫານ;
3. ຈັດລຳດັບຖານະການເງິນ.

ສຳລັບ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ໃຫ້ກຸ່ມເປົ້າໝາຍທີ່ບໍ່ຕິດພັນກັບວຽກງານຫຼັກຊັບ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ.

**ມາດຕາ 11 ສິດ ແລະ ໜ້າທີ່ຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໃຫ້ການບໍລິການຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງລະບຽບສະບັບນີ້;
2. ເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ເປັນຄວາມລັບຂອງລູກຄ້າ ໃນໄລຍະເວລາທີ່ຕົນໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແລະ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາສິບປີ;
3. ລາຍງານຜົນການຈັດລຳດັບຄວາມໜ້າເຊື່ອຖືທີ່ເຜີຍແຜ່ໃຫ້ແກ່ມວນຊົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
4. ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໃນສັນຍາກັບກຸ່ມເປົ້າໝາຍ;
5. ປະຕິບັດພັນທະຄ່າທຳນຽມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງລະບຽບສະບັບນີ້ ແລະ ປະຕິບັດພັນທະອາກອນ ແລະ ຄ່າທຳນຽມ ທີ່ກ່ຽວຂ້ອງກັບການໃຫ້ບໍລິການຂອງຕົນຕໍ່ລັດຖະບານ ສປປ ລາວ ຕາມການກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນແຕ່ລະໄລຍະ.

**ມາດຕາ 12 ການລາຍງານການຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ຕ້ອງລາຍງານການເຄື່ອນໄຫວຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ສະພາບການເຄື່ອນໄຫວທຸລະກິດຢູ່ ສປປ ລາວ ປະຈຳໄຕມາດ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນສິ້ນສຸດແຕ່ລະໄຕມາດ;
2. ສະພາບການເຄື່ອນໄຫວທຸລະກິດຢູ່ ສປປ ລາວ ປະຈຳປີ ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນສິ້ນສຸດປີການບັນຊີ;

3. ຮ່າງສັນຍາການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືກັບກຸ່ມເປົ້າໝາຍໃດໜຶ່ງ ແລະ ແຜນການເຄື່ອນໄຫວລະອຽດ ໃນແຕ່ລະໄລຍະຕໍ່ກຸ່ມເປົ້າໝາຍ;
4. ການປ່ຽນແປງຜູ້ຮັບຜິດຊອບຈັດລໍາດັບຄວາມໜ້າເຊື່ອຖື ເຊັ່ນ: ຊື່ ແລະ ນາມສະກຸນ ແລະ ຊີວະປະຫວັດຫຍໍ້ ພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນມີການປ່ຽນແປງເປັນຕົ້ນໄປ;
5. ການປ່ຽນແປງ, ແກ້ໄຂ, ເພີ່ມສັນຍາລັກ ຫຼື ຄວາມໝາຍຂອງສັນຍາລັກ ທີ່ໃຊ້ເຂົ້າໃນການຈັດລໍາດັບຄວາມໜ້າເຊື່ອຖື ພາຍໃນກໍານົດເວລາ ສິບຫ້າວັນ ນັບແຕ່ວັນມີການປ່ຽນແປງເປັນຕົ້ນໄປ.

ສໍາລັບເນື້ອໃນການລາຍງານ ໃຫ້ປະຕິບັດຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບໃນແຕ່ລະໄລຍະ.

**ມາດຕາ 13 ຄ່າທໍານຽມການຮັບຮອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ**

ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ແກ່ກຸ່ມເປົ້າໝາຍ ຕ້ອງເສຍຄ່າທໍານຽມໃຫ້ແກ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າອອກໃບຮັບຮອງການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ຈໍານວນ ຊາວລ້ານກີບ ແລະ ຕ້ອງ ຊໍາລະພາຍໃນວັນ ບໍລິສັດດັ່ງກ່າວໄດ້ຮັບໃບຮັບຮອງ;
2. ຄ່າຕໍ່ໃບຮັບຮອງການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືຈໍານວນ ສິບລ້ານກີບ ແລະ ຕ້ອງຊໍາລະພາຍໃນວັນໄດ້ຮັບໃບຮັບຮອງ;
3. ຄ່າຄຸ້ມຄອງປະຈໍາປີ ຈໍານວນ ສິບລ້ານກີບ ແລະ ຕ້ອງຊໍາລະພາຍໃນໄຕມາດທີໜຶ່ງຂອງປີຖັດໄປ.

ກໍລະນີ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ຫາກບໍ່ໄດ້ເຊັນສັນຍາໃຫ້ບໍລິການດ້ານການຈັດລໍາດັບຄວາມໜ້າເຊື່ອຖື ໃຫ້ແກ່ກຸ່ມເປົ້າໝາຍພາຍໃນປີນັ້ນ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈໍາປີ.

**ມາດຕາ 14 ມາດຕະການຕໍ່ຜູ້ລະເມີດ**

ກໍລະນີ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ມີການລະເມີດລະບຽບສະບັບນີ້ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ໃຫ້ການບໍລິການຈັດລໍາດັບຄວາມໜ້າເຊື່ອຖື ໂດຍບໍ່ໄດ້ຜ່ານການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ ໜຶ່ງຮ້ອຍລ້ານກີບ;
2. ໃຫ້ການບໍລິການຈັດລໍາດັບຄວາມໜ້າເຊື່ອຖື ນອກຂອບເຂດທີ່ໄດ້ກໍານົດໄວ້ໃນ ມາດຕາ 10 ຂອງລະບຽບສະບັບນີ້ ຈະຖືກປັບໃໝ ຫ້າສິບລ້ານກີບ;
3. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ເປັນຄວາມລັບຂອງກຸ່ມເປົ້າໝາຍ ໃນໄລຍະເວລາທີ່ຕົນໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ແລະ ພາຍຫຼັງສໍາເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາສິບປີ ຈະຖືກປັບໃໝ ຫ້າສິບລ້ານກີບ;
4. ລາຍງານສະພາບການເຄື່ອນໄຫວຂອງຕົນຊັກຊ້າຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 12 ຂອງລະບຽບສະບັບນີ້ ຈະຖືກປັບໃໝ ສິບລ້ານກີບຕໍ່ຄັ້ງ;
5. ບໍ່ລາຍງານ, ເຈດຕະນາລາຍງານບໍ່ຖືກຕ້ອງ ຫຼື ເຊື່ອງຊ້ອນຂໍ້ມູນ ກ່ຽວກັບສະພາບການເຄື່ອນໄຫວຂອງຕົນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 12 ຂອງລະບຽບສະບັບນີ້ ຈະຖືກປັບໃໝ ສິບຫ້າລ້ານກີບ ຕໍ່ຄັ້ງ.

ກໍລະນີ ກຸ່ມເປົ້າໝາຍ ທີ່ໃຊ້ບໍລິການຂອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ທີ່ບໍ່ໄດ້ຜ່ານການຮັບຮອງການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບຈະຖືກປັບໃໝ ໜຶ່ງຮ້ອຍລ້ານກີບ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 15 ການຈັດຕັ້ງປະຕິບັດ**

ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ, ກຸ່ມເປົ້າໝາຍ, ບຸກຄົນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກໍາມະການຄຸ້ມຄອງຫຼັກຊັບ**

ດຣ.ບຸນປອນ ບຸດຕະນະວົງ